## ເງື່ອນໄຂຮັບເອົາການສະລະສິດ

ບຸກຄົນນັ້ນຕ້ອງໄດ້ສອດຄ່ອງນຳກົດເກນຕໍ່ລົງໄປນີ້ທຸກໆຢ່າງ:

- ເປັນລູກຄ້າຜູ້ທີ່ມີເງື່ອນໄຂໄດ້ຮັບຂອງພະແນກ DDA ໂດຍອີງຕາມ RCW 71A.10.020(5).
- ມີຄວາມເສັຽອົງຄະໂດຍອີງຕາມກົດເກນທີ່ຖືກກໍ່ຕັ້ງໄວ້ແລ້ວຢູ່ໃນກົດຫມາຍ Social Security Act.
- ຮ້ອງຂໍເອົາການບໍຣິການປິ່ນປົວຣະຍະຍາວ/Medicaid ແລະ ມີຣາຍໄດ້ທີ່ພິສູດໄດ້ຊຶ່ງບໍ່ກາຍເກີນ 300% ຂອງມາດຕະຖານການຊ່ວຍເຫລືອເງິນ SSI ຂອງຣັດຖະບານກາງ.
  - ຖ້າຫາກວ່າເປັນເດັກນ້ອຍ, ຣາຍໄດ້ ແລະ ຊັບສິນຂອງພໍ່ແມ່ຈະບໍ່ຖືກພິຈາຣະນາຄິດໄລ່ໃສ່
  - ຖ້າຫາກວ່າເປັນຜູ້ໃຫຍ່ອາສັຍຢູ່ນຳຄູ່ຜົວເມັຽ, ຣາຍໄດ້ ແລະ ຊັບສິນຂອງຄູ່ຜົວເມັຽຈະບໍ່ຖືກພິຈາຣະນາຄິດໄລ່ໃສ່.
- ມີຊັບສິນຕ່ຳກວ່າ $2,000 ຫລື ຢູ່ໃນໂຄງການ Apple Health ສຳລັບພະນັກງານທີ່ມີຄວາມເສັຽອົງຄະ (HWD).
- ສອດຄ່ອງນຳຣະດັບຂອງການປິ່ນປົວທີ່ຖືກເອົາໃຫ້ຢູ່ໃນສະຖາບັນການປິ່ນປົວປານກາງສຳລັບບຸກຄົນທີ່ມີຄວາມເສັຽອົງຄະດ້ານປັນຍາແນວຄິດ (ICF/IID) ຕາມທີ່ຖືກຖືກພິຈາຣະນາເຫັນໂດຍການປະເມີນຜົນຂອງຜະແນກ DDA.
- ແຜນການບໍຣິການລວມສູນໃສ່ບຸກຄົນ (PCSP) ຂອງບຸກຄົນນັ້ນສະແດງໃຫ້ເຫັນວ່າຄວາມຕ້ອງທາງດ້ານອະນາມັຍ, ຄວາມປອດພັຍ, ແລະ ການຝຶກຝົນໃຫ້ດີຄືນສາມາດຖືກຕອບສະນອງໄດ້ແນວໃດຢູ່ຕາມຊຸມນຸມຊົນທີ່ມີການບໍຣິການສະລະສິດ ແລະ/ຫລື ການ ຄວບຄຸມເບິ່ງນຳປະຈຳເດືອນ.
- ຕົກລົງເຫັນພ້ອມທີ່ຈະຮັບເອົາການບໍຣິການອີງໃສ່ເຮືອນ ແລະ ຊຸມນຸມຊົນແທນທີ່ວ່າຈະແມ່ນ ICF/IID.
- ສຳລັບ IFS ເທົ່ານັ້ນ, ບຸກຄົນນັ້ນຍັງຈະຕ້ອງ:
  - ອາສັຍຢູ່ໃນເຮືອນຂອງຄອບຄົວ. ອັນນີ້ຫມາຍຄວາມວ່າອາສັຍຢູ່ນຳສະມາຊິກຄອບຄົວອື່ນຢ່າງຫນ້ອຍນຶ່ງຄົນ; ຜົວເມັຽ, ພໍ່ແມ່ກຳເນີດ, ພໍ່ລ້ຽງແມ່ລ້ຽງ ຫລື ພໍ່ນ້າແມ່ນ້າ, ລູກ, ລູກນ້າ, ອ້າຍນ້ອງຄືງໆ, ອ້າຍນ້ອງພໍ່ແມ່ຕ່າງ, ປ້າ, ລຸງ, ພໍ່ເຖົ້າແມ່ເຖົ້າ, ພີ່ນ້ອງຊັ້ນທີນຶ່ງ, ຫລານສາວ ຫລື ຫລານຊາຍ.

## ການເຂົ້າເຖິງ Waiver

ບຸກຄົນຈະຮ້ອງຂໍເອົາການຈົດຊື່ເຂົ້າໃສ່ການສະລະສິດ ຫລື ການສະລະສິດແນວຕ່າງໄດ້ໃນທຸກໆເວລາ. ຈົ່ງສອບຖາມນຳຜູ້ຈັດການຊ່ວຍເຫລືອ/ເອກສານ (CRM). ຖ້າຫາກວ່າບຸກຄົນນັ້ນບໍ່ມີ CRM, ສົ່ງຄວາມໄວ້ນຳສາຍບໍຣິການບໍ່ໄດ້ເສັຽເງິນທ້ອງຖິ່ນຂອງທ່ານ ຫລື ຍື່ນຄຳຮ້ອງຂໍໄປທາງອອນລາຍນ໌ໄດ້ທີ່ **www.dshs.wa.gov/dda/service-and-information-request.**

ການສອດຄ່ອງນຳກົດເກນຂອງການສະລະສິດບໍ່ໄດ້ຮັບປະກັນການເຂົ້າເຖິງການບໍຣິການການສະລະສິດ. ການສະລະສິດແຕ່ລະອັນມີກຳນົດໃນຈຳນວນຄົນຜູ້ທີ່ສາມາດຖືກຮັບໃຊ້. ຜະແນກ DDA ມີສິດອຳນາດທີ່ຈະຈຳກັດການຈົດຊື່ເຂົ້າໃສ່ໃນການສະລະສິດໂດຍອີງຕາມການມີໄວ້ໃຫ້ໃນເງິນທຶນສຳລັບຜູ້ເຂົ້າຮ່ວມໃນການສະລະສິດຄົນໃຫມ່.

## ສິດທິການຟັງເຣື່ອງຈາກອຳນາດການປົກຄອງ

ທຸກໆຄົນມີສິດທິໃນການຟັງເຣື່ອງຈາກອຳນາດການປົກຄອງກ່ຽວກັບການຕັດສິນຕໍ່ລົງໄປນີ້ແນວໃດແນວນຶ່ງບໍ່ກ່ຽວກັບໂຄງການ ຫລື ການບໍຣິການ:

- ເງື່ອນໄຂໄດ້ຮັບ DDA ໄດ້ຖືກປະຕິເສດ, ຕັດ ຫລື ຜະແນກ DDA ໄດ້ຖ່ວງດຶງຢ່າງບໍ່ມີເຫດຜົນໃນການດຳເນີນການຄຳຮ້ອງຂອງ ທ່ານ; ຫລື
- ຂະນິດ ຫລື ຈຳນວນຂອງການບໍຣິການທີ່ທ່ານໄດ້ຖືກອະນຸມັດໃຫ້ໄດ້ຮັບ; ຫລື
- ການປະຕິເສດ, ການລຸດລົງ ຫລື ການຕັດການບໍຣິການ; ຫລື
- ການປະຕິເສດທາງເລືອກເອົາຜູ້ໃຫ້ການບໍຣິການ; ຫລື
- ຖ້າຫາກວ່າບຸກຄົນນັ້ນໄດ້ຍ້າຍໄປຫາບ່ອນຢູ່ອາສັຍແບບຕ່າງ, ບໍ່ແມ່ນບ່ອນທີ່ຄົນໃດຄົນນຶ່ງເລືອກເອົາ; ຫລື
- ການປະຕິເສດຂອງຜະແນກ DDA ທີ່ຈະປະຕິບັດຕາມຄຳຮ້ອງຂໍວ່າບໍ່ໃຫ້ສົ່ງໃບແຈ້ງການໄປຫາຄົນອື່ນຄົນໃດຄົນນຶ່ງ; ຫລື
- ການເຊົາຈົດຊື່ຈາກໂຄງການສະລະສິດ; ຫລື
- ການປະຕິເສດໃນຄຳຮ້ອງຂໍຂອງທ່ານເພື່ອຈະຮັບເອົາການບໍຣິການ ICF/IID ແທນທີ່ວ່າຈະເປັນ ການບໍຣິການສະລະສິດ; ຫລື
- ຜະແນກ DDA ຕັດສິນວ່າການບໍຣິການທີ່ມີຢູ່ໃນການສະລະສິດປັດຈຸບັນຂອງທ່ານສາມາດຕອບສະນອງຄວາມຕ້ອງການການດ້ານສຸຂະພາບ ແລະຄວາມຢູ່ດີມີແຮງ ແລະ ຄົນນັ້ນບໍ່ເຫັນນຳ; ຫລື
- ບຸກຄົນໄດ້ຖືກຕີຣາຄາປະເມີນຜົນວ່າບໍ່ຕ້ອງການຣະດັບການປິ່ນປົວ ICF/IID; ຫລື
- ບຸກຄົນໄດ້ຖືກຕີຣາຄາປະເມີນຜົນວ່າບໍ່ສອດຄ່ອງນຳເງື່ອນໄຂຮັບເອົາຂອງ CIIBS.




ແວ່ເຂົ້າຢ້ຽມພວກເຮົາທາງອອນລາຍນ໌ໄດ້ທີ່:
*dshs.wa.gov/dda/service-and-information-request*

ຊອກຫາຫ້ອງການໄດ້ທີ່:
*dshs.wa.gov/DDA/dda/ find-an-office*

ໂທຫາພວກເຮົາ:

| ຄາວຕີ | ໂທຣະສັບ ແລະ ອີແມລ໌ |
|---|---|
| Chelan, Douglas, Ferry, Grant, Lincoln, Okanogan, Pend Oreille, Spokane, Stevens | (800) 319-7116<br>R1ServiceRequestA@dshs.wa.gov |
| Adams, Asotin, Benton, Columbia, Franklin, Garfield, Kittitas, Klickitat, Walla Walla, Whitman, Yakima | (866) 715-3646<br>R1ServiceRequestB@dshs.wa.gov |
| Island, San Juan, Skagit, Snohomish, Whatcom | (800) 567-5582<br>R2ServiceRequestA@dshs.wa.gov |
| King | (800) 974-4428<br>R2ServiceRequestB@dshs.wa.gov |
| Kitsap, Pierce | (800) 735-6740<br>R3ServiceRequestA@dshs.wa.gov |
| Clallam, Clark, Cowlitz, Grays Harbor, Jefferson, Lewis, Mason, Pacific, Skamania, Thurston, Wahkiakum | (888) 707-1202<br>R3ServiceRequestB@dshs.wa.gov |

*ບຸກຄົນຜູ້ທີ່ຕ້ອງການການອູ້ມຊູນຳການຟັງສຽງ ຫລື ການຕິດຕໍ່ສື່ສານສາມາດໂທຫາຜະແນກ Washington Telecommunication Relay Service ໂດຍການບີບຫາເລກ 7-1-1 ຫລື 1-800-833-6388 (TTY).*

Washington State
Department of Social & Health Services
*Transforming lives*

DSHS 22-1758 LA (Rev. 9/19) Laotian

# ການສະລະສິດໃນການບໍຣິການບຸກຄົນ ແລະ ຄອບຄົວ

ຈາກຜະແນກ **Developmental Disabilities Administration**



Washington State
Department of Social & Health Services
*Transforming lives*

# ການບັນຣະຍາຍໂດຍສະລູບກ່ຽວກັບການສະລະສິດ

ກົມ Department of Social and Health Service's Developmental Disabilities Administration (DDA) ມີການສະລະສິດຂອງໂຄງການບໍຣິການຢູ່ຕາມເຮືອນ ແລະ ຊຸມນຸມຊົນ (HCBS) Medicaid ຫ້າໂຄງການ. ການສະລະສິດແຕ່ລະໂຄງການສະເນີໃຫ້ມີການບໍຣິການອັນເຈາະຈົງເພື່ອຈະຕອບສະນອງຄວາມຕ້ອງການທາງດ້ານອະນາມັຍ ແລະ ຄວາມປອດພັຍຢູ່ໃນຊຸມນຸມຊົນ,ແທນທີ່ວ່າຈະແມ່ນໂຮງພະຍາບານ. ໂຄງການສະລະສິດໃນການບໍຣິການສ່ວນບຸກຄົນແລະຄອບຄົວ (IFS) ສະເນີໃຫ້ມີການບໍຣິການຫລາຍໆຢ່າງເມື່ອເວລາບໍ່ມີໄວ້ໃຫ້ຜ່ານແຫລ່ງຊ່ວຍເຫລືອອື່ນໆ (ປະກັນພັຍ ເອກຊົນ, Medicaid, ໂຮງຮຽນ,ອື່ນໆ.)

**ການສະລະສິດໃນການບໍຣິການສ່ວນບຸກຄົນແລະຄອບຄົວ (IFS)**
ອູ້ມຊູບຸກຄົນຜູ້ທີ່ຕ້ອງການການບໍຣິການສະລະສິດເພື່ອຈະຍັງຢູ່ໃນເຮືອນຂອງຄອບຄົວຢູ່ຄືເກົ່າ.ບຸກຄົນຕ້ອງອາສັຍຢູ່ນໍາສະມາຊິກຄອບຄົວ. ການບໍຣິການໄດ້ຖືກຈໍາກັດໂດຍຈໍານວນເງິນຂອງການແບ່ງສ່ວນໃຫ້ປະຈໍາປີຊຶ່ງຈະຖືກພິຈາຣະນາເບິ່ງໂດຍການປະເມີນຜົນຂອງ DDA ($1,200; $1,800; $2,400; ຫລື $3,600).

ຖ້າຫາກວ່າຄວາມຕ້ອງການສໍາລັບການບໍຣິການທີ່ຖືກຕີຣາຄາປະເມີນຜົນເບິ່ງແລ້ວກາຍເກີນຂອບເຂດຂອງການບໍຣິການທີ່ຖືກເອົາໃຫ້ພາຍໄຕ້ໂຄງການສະລະສິດ IFS, ຜະແນກ DDA ຈະທໍາຄວາມພະຍາຍາມຕໍ່ລົງໄປນີ້ອີກເທື່ອນຶ່ງ ຫລື ຫລາຍເທື່ອເພື່ອຈະຕອບສະນອງຄວາມຕ້ອງການທາງດ້ານສຸຂະພາບ ແລະ ຄວາມຢູ່ດີມີແຮງ:

- ຊີ້ບອກການອູ້ມຊູຕາມທັມມະຊາດທີ່ມີໄວ້ໃຫ້ຕື່ມອີກ;
- ເລີ້ມຕົ້ນເຮັດການຍົກເວັ້ນຕໍ່ກົດຣະບຽບເພື່ອຈະເຂົ້າເຖິງການບໍຣິການທີ່ບໍ່ແມ່ນສະລະສິດທີ່ມີຢູ່ບໍ່ໄດ້ລວມຢູ່ໃນໂຄງການສະລະສິດ IFS ນອກຈາກການອູ້ມຊູຕາມທັມມະຊາດ;
- ສະເນີໃຫ້ໂອກາດທີ່ຈະຮ້ອງຂໍເອົາການສະລະສິດທາງອື່ນທີ່ມີການບໍຣິການທີ່ຕ້ອງການ;
- ສະເນີໃຫ້ມີການຈັດຫາໃຫ້ຢູ່ໃນສະຖານທີ່ປິ່ນປົວປານກາງສໍາລັບບຸກຄົນທີ່ມີຄວາມເສັຽອົງຄະດ້ານສະຕິປັນຍາ ICF/IID.

ຖ້າຫາກວ່າບໍ່ມີທາງເລືອກເອົາຢູ່ຂ້າງເທິງນີ້ທາງໃດຕອບສະນອງຢ່າງສໍາເຣັດໃນຄວາມຕ້ອງການທາງດ້ານສຸຂະພາບ ແລະ ຄວາມຢູ່ດີມີແຮງ, ຜະແນກ DDA ຈະຕັດເງື່ອນໄຂໄດ້ຮັບການສະລະສິດ, ບຸກຄົນນັ້ນອາດຈະຍັງມີເງື່ອນໄຂໄດ້ຮັບຢູ່ການບໍຣິການບໍ່ສະລະສິດຂອງຜະແນກ DDA.

# ການບໍຣິການຂອງການສະລະສິດ

ຈົ່ງໃຊ້ປຶ້ມຄູ່ມືຫົວນີ້ເພື່ອຈະວາງແຜນສໍາລັບການຕີຣາຄາປະເມີນຜົນປະຈໍາປີ. ຜູ້ຈັດການຊ່ວຍເຫລືອເອກສານ (CRM) ຈະອະທິບາຍເຖິງການບໍຣິການ ແລະ ກິດກໍາມົດ, ແລະ ບັນທຶກການບໍຣິການທີ່ຖືກເລືອກເອົາຢູ່ໃນແຜນການບໍ່ຣິການລວມສູນໃສ່ບຸກຄົນ (PCSP). ການບໍຣິການບາງຢ່າງຕ້ອງມີການກວດເບິ່ງຄືນ ແລະ ການອະນຸມັດກ່ອນທີ່ບຸກຄົນນັ້ນຈະໄດ້ຮັບ. ສອບຖາມນໍາ CRM ກ່ຽວກັບວ່າຣາຍຣະອຽດແນວໃດແດ່ທີ່ຕ້ອງການສໍາລັບການອະນຸມັດຜ່ານມາ. ການບໍຣິການຢູ່ໃນສີ່ຂະແນງທີ່ມີ*ຂອບເຂດ*ອາຍຸລວມເອົາ:

- ***ການບໍຣິການຕາມຊຸມນຸມຊົນ*** – ສົ່ງເສີມການເຂົ້າຮ່ວມຂອງລູກຄ້າແລະການປັບຕົວເຂົ້ານໍາຊຸມນຸມຊົນ
- ***ການບໍຣິການຂອງນັກວິຊາການ*** – ການບໍຣິການອູ້ມຊູທີ່ຖືກເອົາໃຫ້ໂດຍນັກວິຊາການທີ່ມີສັນຍາ
- ***ການບໍຣິການໃຫ້ການເບິ່ງແຍງດູແລ*** – ການອູ້ມຊູສໍາລັບຜູ້ເຂົ້າຮ່ວມ ແລະ ຜູ້ໃຫ້ການເບິ່ງແຍງດູແລຂອງເຂົາເຈົ້າ
- ***ຜະລິດທະພັນ ແລະ ການບໍຣິການ*** – ອຸບປະກອນ, ເຄື່ອງໃຊ້ສອຍ ແລະ ການບໍຣິການພິເສດສໍາລັບຜູ້ເຂົ້າຮ່ວມນໍາ

*ໃຊ້ບອກໝາຍໃສ່ເພື່ອຈະສະແດງໃຫ້* ***CRM*** *ເຫັນວ່າການບໍຣິການແນວໃດແດ່ທີ່ສົນໃຈ:*

## ການບໍຣິການຕາມຊຸມນຸມຊົນ

☐ **ການພົວພັນນໍາຊຸມນຸມຊົນ** – ການບໍຣິການເພື່ອຈະເພີ້ມການຕິດແທດໃສ່ ແລະ ການພົວພັນໃນການອູ້ມຊູຊຸມນຸມຊົນທີ່ເປັນທາງການແລະບໍ່ເປັນທາງການ.

☐ **ການໃຫ້ຄໍາປຶກສາຫມູ່ພວກ** – ຜູ້ໃຫ້ຄໍາປຶກສາຂອງຫມູ່ພວກໃຊ້ປະສົບປະການສ່ວນຕົວເພື່ອຈະໃຫ້ການອູ້ມຊູ ແລະ ຄໍາຊີ້ນໍາໃຫ້ແກ່ບຸກຄົນແລະຄອບຄົວ.

☐ **ການອໍານວຍຄວາມສະດວກໃນແຜນການຈຸດລວມໃສ່ບຸກຄົນ** – ການດໍາເນີນການວາງແຜນຊີວິດເພື່ອຈະເພີ້ມຄວາມຫມັ້ນໃຈໃນຕົນເອງ ແລະ ອອກແບບແຜນການກະທໍາ.

☐ **ການຂົນສົ່ງໄປມາ** – ການໃຊ້ເງິນຄືນໃຫ້ຜູ້ໃຫ້ການບໍຣິການສໍາລັບການຂົນສົ່ງໄປມາທີ່ບໍ່ແມ່ນການພະຍາບານທີ່ຕ້ອງການເພື່ອຈະເຂົ້າຫາການບໍຣິການສະລະສິດທີ່ຖືກກ່າວເຈາະຈົງຢູ່ໃນ PCSP.

## ການບໍຣິການຂອງນັກວິຊາການ

☐ **ການບໍຣິການເຮັດໃຫ້ສຸຂະພາບການປະພຶດໃຫ້ຫຸ່ມທ່ຽງ** – ການບໍຣິການເພື່ອຈະຊ່ວຍເຫລືອ ແລະ ອູ້ມຊູໃນຣະຫວ່າງພາວະເດືອດຮ້ອນສຸຂະພາບການປະພຶດ. ອັນນີ້ລວມເອົາການອູ້ມຊູ ແລະ ການປຶກສາການປະພຶດທີ່ດີ, ແລະ ການປິ່ນປົວໂຣກຈິດພິເສດແລະ ປິ່ນປົວນອນໂຮງຫມໍໃນພາວະເດືອດຮ້ອນ.

☐ **ການອູ້ມຊູການປະພຶດໃຫ້ໄປໃນທາງດີ ແລະ ການປຶກສາ** – ການອູ້ມຊູທີ່ແກ້ໄຂຄວາມຕ້ອງການທາງສຸຂະພາບການປະພຶດ. ສິ່ງເຫລົ່ານີ້ລວມເອົາການເຂົ້າແຊກແຊງໂດຍກົງເພື່ອຈະສົ່ງເສີມຄຸນນະພາບຂອງຊີວິດໃຫ້ດີຂື້ນ ແລະ ການເຂົ້າໃນຊຸມນຸມຊົນ.

☐ **ການຕີຣາຄາປະເມີນຜົນເບິ່ງການສ່ຽງອັນຕະຣາຍ** – ການຕີຣາຄາປະເມີນຜົນເບິ່ງການປະພຶດຮຸນແຮງ, ເຝົ້າຣົບກວນ, ອາຣົມທາງເພດ, ຫລື ນໍາລ່າ ເພື່ອຈະພິຈາຣະນາເບິ່ງຄວາມຕ້ອງການໃນການບໍຣິການທາງໂຣກຈິດ, ພະຍາບານ ຫລື ການບໍາບັດ.

☐ **ການບໍຣິການໂຣກຈິດພິເສດ** – ການປິ່ນປົວໂຣກຈິດໂດຍສະເພາະຕໍ່ຄວາມຕ້ອງການຂອງບຸກຄົນຜູ້ທີ່ມີຄວາມເສັຽອົງຄະດ້ານການຈະເຣີນເຕີບໂຕ. *21+*

☐ **ການປຶກສາສໍາລັບພະນັກງານ/ຄອບຄົວ** –ການຝຶກຝົນ ແລະ ການປຶກສາແບບວິຊາການໃຫ້ແກ່ຄອບຄົວ ແລະຊີ້ນໍາໃຫ້ຜູ້ໃຫ້ການບໍຣິການໂດຍກົງເພື່ອຈະຕອບສະນອງຄວາມຕ້ອງການໃຫ້ດີຂື້ນກວ່າເກົ່າ. ການປຶກສາກໍມີໄວ້ໃຫ້.

☐ **ການບໍາບັດຮັກສາ** – ການບໍຣິການດ້ານວິຊາຊີບ, ຮ່າງກາຍ ແລະ ການປາກເວົ້າ, ພາສາ ແລະ ການຟັງສຽງນອກເຫນືອຈາກອັນທີ່ໄດ້ຖືກເອົາໃຫ້ແກ່ທ່ານໂດຍ Medicaid (Apple Health). *21+*

## ການບໍຣິການໃຫ້ການເບິ່ງແຍງດູແລ

☐ **ການຢຸດພັກຊົ່ວຄາວ** – ການຜ່ອນຄາຍຣະຍະສັ້ນໃຫ້ແກ່ບຸກຄົນຜູ້ທີ່ອາສັຍຢູ່ນໍາ ແລະ ເບິ່ງແຍງດູແລບຸກຄົນຜູ້ທີ່ມີຄວາມເສັຽອົງຄະດ້ານການຈະເຣີນເຕີບໂຕແລະສະຕິປັນຍາ.

☐ **ການເບິ່ງແຍງຜູ້ເຖົ້າທີ່ມີຄວາມຊໍານານ** – ການບໍຣິການຊໍາເຮື້ອ,ຣະຍະຍາວ, ເບິ່ງແຍງຜູ້ເຖົ້າ ຫລື ຜູ້ທີ່ບໍ່ແຂງແຮງເພື່ອຈະແກ້ໄຂຄວາມຕ້ອງການທີ່ບໍ່ຖືກຕອບສະນອງເທື່ອໂດຍຜ່ານ Medicaid (Apple Care). *21+*

## ຜະລິດທະພັນ ແລະ ການບໍຣິການ

☐ **ເທັກໂນໂລຈີຊ່ວຍເຫລືອ** - ຜະລິດທະພັນ ແລະ ການຝຶກຝົນ ທີ່ຖືກໃຊ້ເພື່ອຈະສົ່ງເສີມ ຫລື ຮັກສາຄວາມສາມາດໃນການ ທໍາງານ.

☐ **ການປັບຕົວໃຫ້ເຂົ້າກັບສະພາບແວດລ້ອມ** – ການດັດແປງທາງຮູບຮ່າງໃສ່ເຮືອນທີ່ຈໍາເປັນສໍາລັບບຸກຄົນທີ່ຈະດໍາເນີນການດໍາຣົງຊີວິດຢູ່ໃນຊຸມນຸມຊົນ.

☐ **ເຄື່ອງນຸ່ງພິເສດ** - ເຄື່ອງນຸ່ງບໍ່ຈໍາກັດທີ່ຖືກດັດແປງໃສ່ຄວາມຕ້ອງການທີ່ກ່ຽວພັນນໍາຄວາມເສັຽອົງຄະ.

☐ **ອຸບປະກອນພະຍາບານພິເສດ ແລະ ເຄື່ອງໃຊ້ສອຍ** – ອຸບປະກອນ ແລະ ເຄື່ອງໃຊ້ສອຍທີ່ຈໍາເປັນທີ່ບໍ່ມີໄວ້ໃຫ້ພາຍໄຕ້ໂຄງການ Medicaid (Apple Care) ລວມທັງອຸບປະກອນ ແລະເຄື່ອງໃຊ້ສອຍທີ່ຕ້ອງການເພື່ອຈະວາງໃຊ້ແຜນການອູ້ມຊູການປະພຶດທີ່ດີ.

☐ **ການດັດແປງຍານພາຫານະ**-ການດັດແປງໃຫ້ເຫມາະສົມໃສ່ຍານພາຫານະຊຶ່ງອໍານວຍຄວາມສະດວກຄວາມຕ້ອງການຂອງທ່ານ ແລະ ອູ້ມຊູການລວມເຂົ້ານໍາຊຸມນຸມຊົນ.

☐ **ການສຶກສາເຣື່ອງຄວາມຢູ່ດີມີແຮງ** – ຫນັງສືການສຶກສາທີ່ຖືກພິມອອກມາສໍາລັບສ່ວນບຸກຄົນປະຈໍາເດືອນທີ່ຖືກອອກແບບມາເພື່ອຈະຊ່ວຍເຫລືອໃນການກໍາກັບຄວບຄຸມບັນຫາທີ່ກ່ຽວຂ້ອງນໍາສຸຂະພາບ ແລະການບັນລຸເປົ້າຫມາຍຄວາມຢູ່ດີມີແຮງ.

